เພື່ອ ການເຜີຍແຜ່

# ແຜນການຈັດຕັ້ງປະຕິບັດ 6 ເດືອນຂອງ ຂະບວນການປຶກສາຫາລືກັນກ່ອນ ຂອງ ໂຄງການ ປາກລາຍ ໄດ້ຖືກຮັບຮອງ

**ນະຄອນຫຼວງວຽງຈັນ, ສປປ ລາວ, 29 ສິງຫາ 2018 –** ການຈັດຕັ້ງປົກຄອງຂັ້ນສູງ ຂອງ ຄະນະກໍາມາທິການແມ່ນໍ້າຂອງສາກົນ ໄດ້ ຮັບຮອງ ແຜນການຈັດຕັ້ງປະຕິບັດ ຂະບວນການປຶກສາຫາລືກັນກ່ອນ ຂອງ ໂຄງການ ພະລັງງານນໍ້າ ປາກລາຍ ທີ່ຈະດໍາເນີນໄປເປັນເວລາ ຫົກເດືອນ. ແຜນການຈັດຕັ້ງປະຕິບັດດັ່ງກ່າວແມ່ນໄດ້ຖືກຮັບຮອງໃນມື້ນີ້ ທີ່ ກອງປະຊຸມ ປະຈໍາຫົກເດືອນ ທີ່ຈັດຂຶ້ນເປັນເວລາສອງວັນທີ່ ນະຄອນຫຼວງວຽງຈັນ.

ຄະນະກໍາມະການຮ່ວມ ຄມສ ທີ່ປະກອບດ້ວຍຜູ້ຕາງໜ້າ ຂັ້ນຫົວໜ້າກົມ ຈາກ ສີ່ປະເທດສະມາຊິກ ຄື: ຣາຊະອານາຈັກກໍາປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ໄດ້ ເລີ່ມກອງປະຊຸມ ຄະນະກໍາມະການຮ່ວມໃນມື້ວານນີ້ ເພື່ອ ປຶກສາຫາລືກ່ຽວກັບປະເດັນ ດ້ານການຄຸ້ມຄອງ, ການຈັດຕັ້ງ, ການຮ່ວມມື, ວຽກງານດ້ານນະໂຍບາຍ ແລະ ຍຸດທະສາດ ທີ່ກ່ຽວຂ້ອງຕ່າງໆ. ຄະນະກໍາມະການຮ່ວມ ຄມສ ມີໜ້າທີ່ໃນການຈັດຕັ້ງປະຕິບັດ ທິດຊີ້ນໍາ ແລະ ບັນດານະໂຍບາຍ ຂອງ ສະພາມົນຕີ ຄມສ ເຊິ່ງ ແມ່ນການຈັດຕັ້ງສູງສຸດ ຂອງ ຄມສ.

ແຜນການຈັດຕັ້ງປະຕິບັດ ທີ່ຖືກຮັບຮອງ ໄດ້ກໍານົດ ກິດຈະກໍາຫຼັກ ແລະ ຄາດໝາຍ ໃນແຜນວຽກ ທີ່ຈະຈັດຕັ້ງປະຕິບັດ ຕະຫຼອດໄລຍະຂອງຂະບວນການປຶກສາຫາລືກັນກ່ອນ, ໂດຍຖືເອົາການປຶກສາຫາລືກັບພາກສວນກ່ຽວຂ້ອງ ເປັນໃຈກາງ. ໃນຂະບວນການນີ້ ຈະມີການຈັດ ກອງປະຊຸມປຶກສາຫາລືກັບພາກສວນກ່ຽວຂ້ອງ ລະດັບພາກພື້ນ ສອງຄັ້ງ ແລະ ການປະຊຸມແລກປ່ຽນຂໍ້ມູນຂ່າວສານໃນລະດັບຊາດເປັນຊຸດໆ ເພື່ອ ປຶກສາຫາລື ແລະ ບັນທຶກຂໍ້ກັງວົນອັນຊອບທໍາທີ່ມີກ່ຽວກັບໂຄງການ ຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

ທ່ານ ເຕ ນາວຸດ, ປະທານ ຄະນະກໍາມະການຮ່ວມ ໄດ້ກ່າວວ່າ: "ພາກສວນກ່ຽວຂ້ອງ ຄວນເຂົ້າຮ່ວມ ກອງປະຊຸມປຶກສາຫາລືກັບພາກສວນກ່ຽວຂ້ອງ ຂອງ ຄມສ ແລະ ບັນດາກອງປະຊຸມແລກປ່ຽນຂໍ້ມູນຂ່າວສານ ເຊິ່ງເປັນໂອກາດໃຫ້ເຂົາເຈົ້າ ໄດ້ປະກອບຄວາມເຫັນຂໍ້ກັງວົນກ່ຽວກັບໂຄງການປາກລາຍ. ກອງປະຊຸມເຫຼົ່ານີ້ ເປັນຊ່ອງທາງ ທີ່ທ່ານສາມາດສະແດງຄໍາເຫັນ ແລະ ຄວາມກັງວົນ ເພື່ອ ຜົນປະໂຫຍດຂອງ ອ່າງ ແລະ ປະຊາຊົນໃນອ່າງຂອງພວກເຮົາ.

ທ່ານກ່າວຕື່ມວ່າ: "ກົນໄກການປຶກສາຫາລືກັນ ກ່ອນ ບໍ່ແມ່ນ ກົນໄກທີ່ສົມບູນແບບ, ແຕ່ ມັນເປັນກົນໄກທີ່ດີທີ່ສຸດທີ່ເຮົາມີ."

ໃນຂະບວນການປຶກສາຫາລືກັນ ກ່ອນ ຈະໄດ້ມີແຜນການຢ້ຽມຢາມ ພາກສະໜາມ ໃນເຂດໂຄງການ, ເຊິ່ງ ຄາດການວ່າຈະໄດ້ຈັດຂຶ້ນໃນທ້າຍເດືອນຕຸລາ 2018 ທີ່ ເປັນສວນໜຶ່ງ ຂອງ ກອງປະຊຸມ ຄະນະສະເພາະກິດ ຂອງ

ຄະນະກຳມະການຮ່ວມ ຄມສ ຄັ້ງທີ ສອງ ກ່ຽວກັບ ໂຄງການປາກລາຍ. ຄະນະສະເພາະກິດ ເປັນການຈັດຕັ້ງມີໜ້າທີ່ໃຫ້ຄຳປຶກສາແກ່ ຄະນະກຳມະການຮ່ວມ ທີ່ປະກອບດ້ວຍເຈົ້າໜ້າທີ່ອາວຸໂສ ຈາກປະເທດສະມາຊິກ.

ການປຶກສາຫາລືຢ່າງເປັນທາງການ ຂອງ ໂຄງການປາກລາຍ ແມ່ນຄາດຄະເນວ່າ ຈະ ສຳເລັດລົງໃນເດືອນມີນາ 2019, ແຕ່ສາມາດຂະຫຍາຍເວລາອອກໄປໄດ້ຕື່ມອີກ ຕາມການເຫັນດີ ຂອງ ຄະນະກຳມະການຮ່ວມ.

ກອງປະຊຸມຍັງໄດ້ຮັບຟັງ ປະເດັນຫຼັກອື່ນໆທີ່ຍັງ ຄົງຄ້າງ ລວມທັງແຜນດຳເນີນງານ ຮ່ວມກັນ ຂອງ ໂຄງການ ປາກແບງ ແລະ ການທົບທວນບົດລາຍງານ ຂອງ ການປັບປຸງ ການອອກແບບ ໂຄງການເຂື່ອນໄຟຟ້າ ໄຊຍະບູລີເປັນຕົ້ນ.

ແຜນດຳເນີນງານຮ່ວມກັນ ກຳນົດ ຂະບວນການເຮັດວຽກ ພາຍຫຼັງ ສຳເລັດ ຂະບວນການ ປຶກສາຫາລືກັນ ຂອງ ໂຄງການປາກແບ່ງ ແລະ ສ້າງກົນໄກ ເພື່ອ ຮັບຟັງຄຳເຫັນ, ການແລກປ່ຽນຂໍ້ມູນ ແລະ ຄວາມຮູ້ ລະຫວ່າງ ຜູ້ພັດທະນາໂຄງການ, ສປປ ລາວ ແລະ ຄມສ ແລະ ພາກສ່ວນກ່ຽວຂ້ອງ ໃນການອອກແບບ, ການ ກໍ່ສ້າງ ແລະ ການດຳເນີນງານ ຂອງ ໂຄງການ. ຄະນະກຳມະການຮ່ວມ ໄດ້ ຮັບຊາບ ວ່າ ຣາຊະອານາຈັກ ກຳປູເຈຍ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ໄດ້ ເຫັນດີຕໍ່ກັບ ຮ່າງສະບັບສຸດທ້າຍຂອງ ແຜນດຳເນີນງານຮ່ວມກັນ ສ່ວນ ສປປ ລາວ ແມ່ນຍັງຢູ່ໃນໄລຍະ ດຳເນີນການປຶກສາຫາລືພາຍໃນປະເທດ.

ບົດລາຍງານ ປະເມີນການອອກແບບໂຄງການໄຊຍະບູລີ ແມ່ນໝາກຜົນ ຂອງ ການສຶກສາ ຂອງ ກອງເລຂາ ຄມສ ເພື່ອ ທວນຄືນເບິ່ງວ່າ ຂໍ້ສະເໜີຈາກ ທີ່ໄດ້ຈາກ ຂະບວນການປຶກສາຫາລືກັນກ່ອນຂອງ ໂຄງການໄຊຍະບູລີ ນັ້ນໄດ້ຖືກນຳມາພິຈາລະນາ ໃນການອອກແບບຄືນໃໝ່ຂອງໂຄງການດັ່ງກ່າວ ຫຼື ບໍ່. ຄືກັນກັບ ແຜນງານດຳເນີນການຮ່ວມຂອງໂຄງການປາກແບ່ງ, ຣາຊະອານາຈັກກຳປູເຈຍ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ໄດ້ເຫັນດີຕໍ່ບົດລາຍງານທົບທວນຂອງໂຄງການໄຊຍະບູລີ, ສ່ວນ ສປປ ລາວ ແມ່ນກຳລັງດຳເນີນການປຶກສາຫາລືພາຍໃນຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງ.

ສະມາຊິກຄະນະກຳມະການຮ່ວມໄດ້ ຮັບຮອງໃນຫຼັກການ ກ່ຽວກັບ ການສ້າງຕັ້ງ ຄະນະກຳມະການກວດສອບ ໃນກອບ ວຽກຂອງ ຄມສ. ຄະນະດັ່ງກ່າວຈະປະກອບມີຊ່ຽວຊານຈາກບັນດາປະເທດສະມາຊິກ ເຊິ່ງ ຈະຊ່ວຍ ຄະນະກຳມະການຮ່ວມໃນການປະຕິບັດໜ້າທີ່ ທີ່ຕິດພັນກັບ ການລາຍງານສະພາບການເງິນ, ການຄຸ້ມຄອງລະບົບພາຍໃນ, ລະບົບຄຸ້ມຄອງຄວາມສ່ຽງ ແລະ ໜ້າທີ່ການກວດສອບບັນຊີ.

ການຮັບຮອງ ດັ່ງກ່າວ ຈະໄດ້ວາງພື້ນຖານໃນການສ້າງຕັ້ງ ຄະນະກຳມະການກວດສອບ ຂອງ ຄມສ, ເຊິ່ງຈາກນັ້ນແມ່ນຈະ ໄດ້ຖືກຮັບຮອງ ໂດຍ ຄະນະກຳມະການຮ່ວມ.

ກອງປະຊຸມດັ່ງກ່າວ ທີ່ໄດ້ສຳເລັດລົງໃນວັນນີ້ ຍັງໄດ້ ປຶກສາຫາລືກັນໃນຫຼາຍ ປະເດັນ ລວມທັງການຈັດຕັ້ງປະຕິບັດ ຖະແຫຼງການສຽມລຽບ, ລາຍງານຄວາມຄືບໜ້າຂອງ ການປັບປຸງຍຸດທະສາດການພັດທະນາພະລັງງານນ້ຳແບບຍືນຍົງ ໃນອ່າງແມ່ນ້ຳຂອງຕອນລຸ່ມ ແລະ ການປັບປຸງໃຫ້ສົມບູນ ບົດແນະນຳ ການປະເມີນຜົນກະທົບສິ່ງແວດລ້ອມ ແບບຂ້າມຊາຍແດນ.

ຄມສ ມີແຜນ ຈັດກອງປະຊຸມພາກສວນກ່ຽວຂ້ອງ ລະດັບພາພື້ນ ຄັ້ງທໍາອິດ ຂອງ ໂຄງການປາກລາຍ ໃນລະຫວ່າງ ວັນທີ 20 – 21 ກັນຍາ 2018 ທີ່ ນະຄອນຫຼວງວຽງຈັນ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນໍ້າຂອງ ຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນໍ້າຂອງ ລະຫວ່າງ ຣາຊະອານາຈັກກໍາປູເຈຍ, ສປປ ລາວ , ຣາຊະອານາຈັກໄທ ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນໍ້າ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນໍ້າເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

**- ຈົບ -**

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :**

ທ່ານ ໂສພຶກ ແມ
ເຈົ້າໜ້າທີ່ ການ ຂ່າວສານ
ກອງເລຂາ ຄະນະກໍາມາທິການແມ່ນໍ້າຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ext. 4070
ໂທລະສັບມືຖື : +856-20- 92479737

###